ເຫຼັ້ມII
ສະບັບ ປັບປຸງໃໝ່

# ລວມເພງລາວ
# 199 ເພງດັງ
## ໃນອະດີດ ແລະ ປະຈຸບັນ




ຮິບໂຮມ ແລະ ຈັດພິມໂດຍ : ຈັນທອນ ທັມມະເທໂວ
ຮຽບຮຽງ ໂດຍ : ບຸນເສີນ ແສງມະນີ
ກວດແກ້ ໂດຍ : ໄຊຍະສິນ ສີໂຄດຈຸນນະມາລີ

ເຫຼັ້ມII
ສະບັບ ປັບປຸງໃໝ່

# ລວມເພງລາວ

# 199 ເພງດັງ

## ໃນອະດີດ ແລະ ປະຈຸບັນ




ຮິບໂຮມ ແລະ ຈັດພິມໂດຍ : ຈັນທອນ ທັມມະເທໂວ
ຮຽບຮຽງ ໂດຍ : ບຸນເສີນ ແສງມະນີ
ກວດແກ້ ໂດຍ : ໄຊຍະສິນ ສີໄຄດຈຸນນະມາລີ

ອະນຸຍາດພິມ ( ສະບັບປັບປຸງໃໝ່ )
ເລກທີ 36/ສປກ/04 ລົງວັນທີ 26 ເດືອນ ກໍລະກົດ ປີ 2004
ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ, ກົມສິລະປະກຳ

* ພິມຄັ້ງທີ III ຈຳນວນ 5 000 ຫົວ
ຕາມ ລທບ 446 ພຈ 24122009 ຂະໜາດພິມ 21 cm x 14.5 cm
ພິມທີ່ ປະລິນດາ ການພິມ
ຈັດພິມໂດຍ: ຈັນທອນ ທັມມະເທໂວ
ໂທ: 020 5662956, 021 770585

( © ສະຫງວນ ລິຂະສິດ )

## *ທ່ານຜູ້ອ່ານ ທີ່ນັບຖືທັງຫຼາຍ*

ພວກເຮົາໄດ້ຊື່ນຊົມ ກັບປຶ້ມ 160 ເພງດັງ ເຫຼັ້ມທີ I ໄປແລ້ວ ຊຶ່ງຈັນທອນ ທັມມະເທໂວ ໄດ້ນຳສະເໜີ ຕໍ່មະຫາຊົນທັງຫຼາຍ, ກໍນັບວ່າເປັນຜົນງານ ທີ່ຍິ່ງໃຫຍ່ ຊຶ່ງໄດ້ທຸ້ມເທວັດຖຸ ແລະຈິດໃຈເຂົ້າໃນການທ້ອນໂຮມເພງເຫຼົ່ານີ້ ເພື່ອໃຫ້ເປັນມໍລະດົກແກ່ລູກຫຼານໄດ້ສືບຕໍ່ກັນໄປໃນພາຍໜ້າ. ແຕ່ກໍເປັນສິ່ງແນ່ນອນທີ່ປາສະຈາກບໍ່ໄດ້ບາງສິ່ງອາດມີອັນຄາດເຄື່ອນໄປແດ່, ເປັນຕົ້ນ ແມ່ນບາງປະໂຫຍກ ຫຼື ຊື່ຂອງຜູ້ແຕ່ງເພງ ຊຶ່ງກໍປາສະຈາກບໍ່ໄດ້ ເພາະວ່າຕັ້ງແຕ່ໃດມາບໍ່ມີໃຜຮິບໂຮມເປັນຕູ້ເອກະສານເກັບມ້ຽນໄວ້ ເພື່ອໃຫ້ພວກເຮົາໄດ້ສຶກສາຄົ້ນຄ້ວາ ເກັບກຳ ຂໍ້ມູນຕ່າງໆ. ຊຶ່ງກໍມີຄວາມຫຍຸ້ງຍາກພໍສົມຄວນໃນການວິ່ງເຕັ້ນ ຊອກຫາຊື່ຂອງຜູ້ແຕ່ງເພງ ແຕ່ລະເພງ ວ່າເພງໃດເປັນຂອງຜູ້ໃດ, ບາງຄົນກໍຍັງມີຊີວິດຢູ່ ແລະ ບາງຄົນກໍຈາກໄປແລ້ວ ຫຼືບໍ່ ກໍບໍ່ຢູ່ເມືອງລາວເຮົາແລ້ວ. ເນື້ອຮ້ອງ ແລະທຳນອງຂອງເພງເກົ່າ ຊຶ່ງໄດ້ ນຳມາຮ້ອງໃໝ່ໃນ ປະຈຸບັນນີ້ ມີຫຼາຍເພງ ກໍຖືກດັດແປງໄປ, ບາງທີ ກໍເຮັດໃຫ້ເນື້ອເພງນັ້ນເສັຽຄວາມໝາຍ, ຜິດພ້ຽນຈາກບົດເດີມ, ພ້ອມກັນນັ້ນ ສະບັບເດີມຊຳພັດຖືກສູນຫາຍໄປ ຍ້ອນຫຼາຍເຫດຜົນ. ສະນັ້ນ ຈຶ່ງເຮັດໃຫ້ການຈັດທຳ ພົບຄວາມຫຍຸ້ງຍາກ. ແຕ່ ເຖິງຈະມີຂໍ້ຂາດຕົກບົກຜ່ອງແດ່ ເລັກນ້ອຍກໍຕາມ ກໍຍັງຖືວ່າເປັນການລິເລີ່ມທີ່ດີທີ່ສຸດ, ຜູ້ຮິບໂຮມ ແມ່ນມີຄວາມບໍລິສຸດ ຈິງໃຈ ເພື່ອຢາກໃຫ້ປຶ້ມລວມເພງນີ້ ກາຍເປັນແຫຼ່ງຄວາມຮູ້ຄູ່ສິລະປິນ ແລະຄົນລາວທຸກໆຄົນທີ່ມີຫົວໃຈຮັກສິລະປະວັດທະນະທຳລາວ ຊຶ່ງຖ້າບໍ່ມີການລິເລີ່ມຄືດັ່ງກ່າວນີ້ແລ້ວ ຫຼາຍໆບົດເພງ ອາດສູນຫາຍໄປ ແລະ ໜ້ອຍບໍ່ນານ ອາດຖືກຊາດອື່ນແອບອ້າງ ແລະຢິບສວຍເອົາໄປເປັນຂອງເຂົາກໍອາດເປັນໄປໄດ້. ສະນັ້ນ ພວກເຮົາຄົນລາວທຸກຄົນຄວນຊ່ວຍກັນ ອະນຸລັກ ຮັກສາ ແລະ ຊ່ວຍກັນແກ້ໄຂ ສິ່ງທີ່ຍັງຂາດຕົກບົກຜ່ອງ ເພື່ອປັບປຸງໃຫ້ຄົບຖ້ວນ ສົມບູນຂຶ້ນໄປເລື້ອຍໆ.

ພ້ອມກັນນີ້ຂ້າພະເຈົ້າ ກໍຂໍຂອບໃຈຫຼາຍໆ ຕໍ່ບັນດາທ່ານທີ່ໄດ້ສົ່ງຂໍ້ມູນຕາມທີ່ຕົນຮູ້ມາໃຫ້ພວກເຮົາ ເພື່ອຈະແກ້ໄຂໃນສະບັບຕໍ່ໄປ, ບໍ່ວ່າທາງດ້ານໂທລະສັບ ຫຼືຈົດໝາຍ, ນີ້ລະຄືຜູ້ທີ່ມີແນວຄິດສ້າງສັນ ຢາກໃຫ້ສະໝຸດປຶ້ມເພງລວມ ສົມບູນແບບຂຶ້ນເລື້ອຍໆ.

ອີງຕາມຄຳຮຽກຮ້ອງຂອງທ່ານຜູ້ອ່ານທັງຫຼາຍ ຢາກໃຫ້ບອກຊື່ຜູ້ແຕ່ງ ແລະຜູ້ຮ້ອງ ຜູ້ທຳອິດ, ພວກເຮົາກໍພະຍາຍາມຊອກຫາຂໍ້ມູນນີ້ອີກ , ເທົ່າທີ່ໄດ້ມາກໍຈະໄດ້ສະເໜີຕໍ່ບັນດາທ່ານໃນປຶ້ມເພງເຫຼັ້ມ II ນີ້, ແລະ ແນ່ນອນອີກວ່າຈະບໍ່ປະຕິເສດ ສິ່ງທີ່ຜິດພາດ ຄາດເຄື່ອນ, ເພາະວ່າ ມັນເປັນການຫຍຸ້ງຍາກທີ່ຈະໃຫ້ໄດ້ 100 % . ພວກເຮົາຍິນດີຮັບເອົາຄວາມຕຳນິສິ່ງຂ່າວ ແລະຂໍ້ມູນເພີ່ມເຕີມຂອງທ່ານສະເໜີ, ຂໍຂອບໃຈໄວ້ລ່ວງໜ້າເປັນຢ່າງສູງ.

ຢູ່ເມືອງລາວ , ຮ້ອງເພງລາວ , ຟັງເພງລາວ  ແມ່ນຄົນລາວທີ່ສົມບູນ.

ນະຄອນຫຼວງວຽງຈັນ ,
ວັນທີ 26/07/2004

ໄຊຍະສິນ  ສີໂຄດຈຸນນະມາລີ

# ຄຳເຫັນ ຂອງ ຜູ້ ຮຽບຮຽງ

ທ່ານ ນ. ຈັນທອນ ທັມມະເທໂວ ກໍແມ່ນນຶ່ງໃນຈຳນວນ ນັກສະສົມເພງ ທັງໃນອະດີດ ແລະ ປະຈຸບັນ . ທ່ານ ໄດ້ມີຄວາມມຸ່ງໝັ້ນດ້ວຍຫົວໃຈຮັກເພື່ອຢາກໃຫ້ເພງລາວກາຍເປັນມໍລະດົກວັດທະນະທຳລາວ ແລະຍືນຍົງຄົງຢູ່ກັບຄົນລາວ, ສັງຄົມລາວຕະຫຼອດການ.

ຂ້າພະເຈົ້າ ບໍ່ແມ່ນນັກຮ້ອງ ແລະ ບໍ່ແມ່ນ ນັກປະພັນເພງ ແຕ່ຂ້າພະເຈົ້າມີຫົວໃຈຮັກສຽງເພງ ມັກຮ້ອງເພງ ແລະມັກຟັງເພງ ໂດຍສະເພາະ ແມ່ນເພງລາວ, ເວົ້າແນວນີ້ ບໍ່ແມ່ນວ່າ ຂ້າພະເຈົ້າບໍ່ມັກຮ້ອງ ແລະ ບໍ່ມັກຟັງ ເພງຕ່າງປະເທດ , ແນ່ນອນ ເພງຊາດໃດ ກໍມີເອກະລັກຂອງຊາດນັ້ນ, ມີຄວາມມັກ ຄວາມນິຍົມ ແລະ ມີຄວາມໝາຍສະເພາະຕົວຂອງໃຜລາວ. ແຕ່ເວົ້າຈາກໃຈຈິງແລ້ວ ເພງຊາດອື່ນໆ ເຖິງຈະມ່ວນ ແລະ ມີຄວາມໝາຍປານໃດກໍຕາມ ແຕ່ຂ້າພະເຈົ້າກໍຍັງຮັກເພງລາວ ໂດຍສະເພາະ ແມ່ນເພງລາວໃນອະດີດ ທີ່ນັກປະພັນເພງຮຸ່ນກ່ອນໆຂອງພວກເຮົາ ໄດ້ບັນຈົງແຕ້ມແຕ່ງ ເປັນບົດເພງຂຶ້ນມາ ດ້ວຍ ອາລົມຈິດວິນຍານ ທີ່ລຶກລ້ຳພິສະດານ. ເຖິງການເວລາຈະຜ່ານພົ້ນໄປຈາກຮຸ່ນຄົນ ສູ່ຮຸ່ນຄົນ ຈາກອະດີດສູ່ປະຈຸບັນກໍຕາມ ແຕ່ບົດເພງເຫຼົ່ານັ້ນ ຍັງມີຄວາມເປັນອະມະຕະ ຕະຫຼອດການ, ເຮັດໃຫ້ຜູ້ຮ້ອງແລະຜູ້ຟັງ ຫຼົງໄຫຼ ໄຝ່ເພີ້ໄປກັບເນື້ອຮ້ອງທຳນອງເພງ ທີ່ໄດ້ພັນລະນາພາບແຫ່ງຄວາມສົດສວຍງົດງາມຂອງທຳມະຊາດ ຂອງບ້ານເກີດເມືອງນອນ, ບາງເພງກໍເວົ້າເຖິງຄວາມຮັກ, ຄວາມຫ່ວງໄຍ, ການຈາກໄປແລະ ການລໍຄອຍ ບາງຄັ້ງ ກໍເວົ້າເຖິງຄວາມສົມຫວັງ ແລະ ຜິດຫວັງ ຄວບຄູ່ກັນໄປນຳ, ຊຶ່ງທັງໝົດເຫຼົ່ານັ້ນເນື້ອໃນບາງເພງ ກໍສະແດງອອກມາໃຫ້ເຫັນໂດຍກົງ ແຕ່ບາງບົດເພງກໍສົມທຽບ ປຽບປານ ເຊັ່ນ : “ ຟ້າບໍ່ຕ່ຳພຽງດິນ , ສາຍນ້ຳບໍ່ໄຫຼຢ້ອນກັບ , ສູງກວ່າພູເຂົາ, ກວ້າງເທົ່າມະຫາສະໝຸດ, ໄກຈົນສຸດຂອບຟ້າ ແລະ ອື່ນໆ. ຊຶ່ງເພງແຕ່ລະເພງ ລ້ວນແຕ່ມີເອກະລັກ ແລະ ມີຄວາມໝາຍ ສະເພາະຕົວຂອງມັນ. ໄດ້ຮ້ອງເພງ ,ໄດ້ຟັງເພງ ແລະໄດ້ຢູ່ບ່ອນທີ່ມີສຽງເພງເຮັດໃຫ້ຊີວິດກັບຊີວິດ , ຊີວິດ ກັບ ທຳມະຊາດ, ຫົວໃຈກັບຫົວໃຈ ຫຍັບມໍ່ເຂົ້າຫາກັນ ບົນຄວາມຜູກພັນ ທີ່ລ້ຳລຶກ ເຫຼືອຈະພັນລະນາ.

ຂໍຂອບໃຈ ທ່ານ ນ. ຈັນທອນ ທັມມະເທໂວ ທີ່ໄດ້ ສຸມສະຕິປັນຍາ , ເຫື່ອແຮງ , ແລະ ວັດຖຸ ເງິນຄຳຂອງຕົນເອງ ເພື່ອ ຮິບໂຮມ ຈຳນວນ 199 ບົດເພງ ມາຈັດພິມເປັນເຫຼັ້ມ ດ້ວຍຈຸດປະສົງ ເພື່ອຢາກໃຫ້ເພງລາວ ທີ່ມີຢູ່ ຊະຊາຍ ມີໂອກາດ ໄດ້ມາຮວມຢູ່ບ່ອນດຽວກັນ. ຂ້າພະເຈົ້າ ເຊື່ອໝັ້ນວ່າ ປຶ້ມລວມເພງລາວເຫຼັ້ມນີ້ ຈະເປັນຄູ່ມືທີ່ມີຄຸນຄ່າສຳລັບຄົນລາວທີ່ມີຫົວໃຈຮັກ ເພງລາວ ໂດຍສະເພາະ ແມ່ນຜູ້ທີ່ມັກຮ້ອງ ແລະມັກຟັງເພງລາວຕະຫຼອດໄປ.

ຂໍຂອບໃຈ

ນະຄອນຫຼວງ ວຽງຈັນ,
ວັນທີ 26 / 07 / 2004



ບຸນເສີນ ແສງມະນີ

# *ຜູ້ຮຽບໂຮມ ແລະ ຈັດພິມ*

ດ້ວຍຄວາມຮັກ ແລະນິຍົມຊົມຊອບ ໃນສິລະປະເພງລາວ , ຂ້າພະເຈົ້າມີຄວາມພາກພູມໃຈ ແລະດີໃຈເປັນຢ່າງຍິ່ງທີ່ໄດ້ມີສ່ວນຮ່ວມໃນການສະສົມ ແລະຮຽບໂຮມບົດ ເພງຕ່າງໆ ຂອງ ນັກປະພັນເພງລາວ ຫຼາຍໆທ່ານໄວ້ໃນປື້ມເຫຼັ້ມນີ້, ຈຸດປະສົງກໍເພື່ອເຜີຍແຜ່ແລະເຊີນຊວນ ໃຫ້ຄົນລາວທຸກໆຄົນໃຫ້ຄວາມສົນໃຈໃນສິລະປະເພງລາວ,ອະນຸລັກເພງລາວແລະ ເພື່ອບໍ່ໃຫ້ສິລະປະເພງລາວ ເລື້ອນລາງຈາງຫາຍໄປຈາກສັງຄົມລາວ,ພ້ອມກັນນັ້ນກໍເພື່ອບັນທຶກໄວ້ ພູມປັນຍາ ທີ່ເອກອ້າງ ສູງສົ່ງ ຂອງ ນັກປະພັນເພງລາວ ແຕ່ລະທ່ານ ທີ່ໄດ້ ສຸມສະຕິປັນຍາແລະເຫື່ອແຮງ ທາງດ້ານມັນສະໝອງ ເພື່ອປະດິດຄິດແຕ່ງ ບົດເພງເຫຼົ່ານັ້ນ ຂຶ້ນມາ ໃຫ້ພວກເຮົາໄດ້ ຮ້ອງ ໄດ້ຟັງກັນ , ເຊິ່ງ ພວກເຮົາຄົນລາວທຸກໆຄົນ ຄວນຈາລຶກໄວ້ ຄຸນງາມຄວາມດີ ແລະບັນທຶກ ໄວ້ເປັນຊັບສິນທາງປັນຍາທີ່ລ້ຳຄ່າເພື່ອບໍ່ໃຫ້ຊາດອື່ນແອບອ້າງ ຫຼື ຍືບສວຍເອົາໄປເປັນຂອງເຂົາເຈົ້າ ແລະ ພ້ອມກັນນັ້ນກໍຮຽບໂຮມໄວ້ເພື່ອໃຫ້ລູກຫຼານກໍຄືຄົນລາວທຸກໆຄົນ ໄດ້ ສືບຕໍ່ ສຶກສາ ຄົ້ນຄວ້າແລະຮ່ຳຮຽນ. ຂ້າພະເຈົ້າ ຫວັງຢ່າງຍິ່ງວ່າ ປື້ມຮຽບໂຮມບົດເພງເຫຼັ້ມນີ້ ຈະເປັນປະໂຫຍດໃຫ້ແກ່ສັງຄົມ ແລະແກ່ທ່ານບໍ່ຫຼາຍກໍ ໜ້ອຍ.

ພ້ອມກັນນີ້ , ຂ້າພະເຈົ້າ ຂໍຂອບໃຈ ແລະຮູ້ບຸນຄຸນ ເປັນຢ່າງສູງ ມາຍັງທຸກໆທ່ານ ທີ່ເປັນເຈົ້າຂອງ ບົດປະພັນເພງລາວ ຈຳນວນ 199 ບົດເພງ ທີ່ຂ້າພະເຈົ້າ ໄດ້ ສະສົມຮຽບໂຮມ ໄວ້ໃນປື້ມເຫຼັ້ມນີ້ , ແລະ ຂໍສະແດງຄວາມຂອບອົກ ຂອບໃຈ ເປັນຢ່າງສູງ ມາຍັງ *ທ່ານ ບຸນເສີນ ແສງມະນີ , ທ່ານ ໄຊຍະສົນ ສີໂຄດຈຸນນະມາລີ ແລະ ທ່ານ ສົມໃຈ ເລັ່ງສະຫວັດ* ທີ່ໄດ້ເສັຽສະລະເວລາອັນມີຄຸນຄ່າ ກວດແກ້ , ຮຽບຮຽງ ແລະ ຄົ້ນຄ້ວາ ຊອກຫາຂໍ້ມູນຈາກແຫຼ່ງຕ່າງໆ ຊ່ວຍຂ້າພະເຈົ້າໃນການຮຽບໂຮມ ແລະ ຂໍຂອບອົກຂອບໃຈເປັນຢ່າງສູງມາຍັງ ທຸກໆທ່ານ ທີ່ໃຫ້ຂໍ້ມູນເພີ້ມເຕີມ ແລະ ປະກອບຄຳຄິດ ຄຳເຫັນ ເຂົ້າໃນການປັບປຸງ ປື້ມຮຽບໂຮມເພງລາວເຫຼັ້ມນີ້ໃຫ້ມີເນື້ອໃນຄົບຖ້ວນ ແລະສົມບູນຂຶ້ນກວ່າເດີມ.

ແນ່ນອນ ໃນປຶ້ມເຫຼັ້ມນີ້ , ອາດຈະ ປາສະຈາກບໍ່ໄດ້ອີກ ຂໍ້ຜິດພາດ ຄາດເຄື່ອນ ທາງດ້ານເນື້ອໃນ , ຊື່ຜູ້ປະພັນເພງ ແລະ ຊື່ຜູ້ຮ້ອງຜູ້ທຳອິດ. ດັ່ງນັ້ນ, ຂ້າພະເຈົ້າ ຈຶ່ງຂໍ ກາບ ອະໄພນຳ ທຸກໆທ່ານມານະທີ່ນີ້ດ້ວຍ , ແລະຍິນດີ ຮັບເອົາຄຳຕຳນິຕິຊົມ ຈາກທຸກໆທ່ານ ເພື່ອນຳໄປປັບປຸງແກ້ໄຂ ໃນໂອກາດຕໍ່ໄປ.

ຂໍຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງ

ຈັນທອນ ທັມມະເທໂວ

*ທ່ານຈົ່ງຍິ້ມຫົວເຖີດ ......ແລະ ໂລກ ກໍຈະຍິ້ມຫົວກັບທ່ານ ຕະຫຼອດໄປ ......*
*ຖ້າ ທ່ານ ຮ້ອງໄຫ້ ......ແລະ ທ່ານ ກໍຈະຮ້ອງໄຫ້ ແຕ່ພຽງຄົນດຽວ ......*

---

24/VII

ຫ້າງຈຳໜ່າຍ

ອຈ. ຄຳຫຼ້າ ບົວແກ້ວ

# ສາລະບານ


| ໜ້າ ຊື່ເພງ | ໜ້າ ຊື່ເພງ |
|---|---|
| 1. ເພງຊາດລາວ | 25. ຄວາມຮັກຂອງນ້ອງຄິງຊື້ດ້ວຍເງິນ |
| 2. ກຸຫຼາບປາກຊັນ | 26. ງາມຢ່າງນີ້ໃຜຈະບໍ່ຮັກ |
| 3. ກຸຫຼາບປາກເຊ | 27. ຈິດໝາຍນ້ອຍ |
| 4. ກຸຫຼາບແທນກາຍ | 28. ເງິນໜໍເງິນ |
| 5. ກ້ຽວສາວແຄມງື່ມ | 29. ຈອມໃຈຄືນຈິນ |
| 6. ກັບມາຮັກກັນໃໝ່ | 30. ຈະຮັກໃຜດີ |
| 7. ກ້ຽວສາວບ້ານເກີນ | 31. ຈູບຝາກຮັກ |
| 8. ແກ້ວລືມຄອນ | 32. ຈຳປາເມືອງລາວ |
| 9. ແກ່ແລ້ວຍັງງາມ | 33. ໃຈໜໍໃຈ |
| 10. ແກ່ກາຍໃຈໜຸ່ມ | 34. ໃຈຍິງ |
| 11. ຂອບໃຈ | 35. ສວນມອນລຳລຶກ |
| 12. ຂາດຮັກ | 36. ສິງສານອ້າຍເຖິດ |
| 13. ຂັນໝາກມາແລ້ວ | 37. ສັ່ງຟ້າຫາຄູ່ |
| 14. ຄິງເຊໂດນລຳລຶກ | 38. ສິ້ນສັ່ງຈາກໄປ |
| 15. ຄືນໃຈດຳ | 39. ສິ້ນແລ້ວຮັກຂ້າ |
| 16. ຄັ້ງນຶ່ງທີ່ຝັ່ງເຊກອງ | 40. ສິ້ນສຸດກັນທີ |
| 17. ຄິດເຖິງ | 41. ສິມຣິດສິມຮັກ |
| 18. ຄິດຮອດຄວາມຮັກ | 42. ສອງຝັ່ງຂອງ |
| 19. ຄືນງາມໃຈແຫຼ້ | 43. ສະຫວັດດີນ້ອງສາວ |
| 20. ຄືນທີ່ເຂົາລືມ | 44. ສລັກຈິດ |
| 21. ຄືນທີ່ຫວັງດີ | 45. ສະຫວັນແດນຮັກ |
| 22. ຄືນນັ້ນ | 46. ສາມໝື່ນເມືອງເຟືອງ |
| 23. ຄືນຮັກຄືນສລາຍ | 47. ສາວນາແກ |
| 24. ຄ່າຄວາມງາມ | 48. ສາວຖິ່ນແກ້ວ |

| | |
|---|---|
| 49. ສາວໄຕດຳຕຳແຜ່ນ | 75. ໄຕດຳລຳພັນ |
| 50. ສຸດປຣາດຖະໜາ | 76. ຕິກແຂ່ງແກ່ງລອຍ |
| 51. ສຸກສັນວັນປີໃໝ່ | 77. ຖ້າອ້າຍມີປີກ |
| 52. ສື່ຮັກຈາກສາຍຕາ | 78. ທ່າເດືອແຫ່ງຄວາມຫຼັງ |
| 53. ສຽງຄວນຈາກຊາຍຈິນ | 79. ທາງຊີວິດ |
| 54. ແສງເດືອນເຕືອນເສົ້າ | 80. ທຳມະຊາດພູເຂົາຄວາຍ |
| 55. ເສື້ອຂຽວທີ່ຮັກ | 81. ທຳມະຊາດເມືອງສຸ້ຍ |
| 56. ເສື້ອແດງທີ່ຮັກ | 82. ນຶ່ງອ້າຍຊາຍດຽວ |
| 57. ສຽງສັ່ງຈາກຄົນຊ້ຳ | 83. ນົກເຂົາລືມຄອນ |
| 58. ຊັງຄົນຫຼາຍໃຈ | 84. ນຶ່ງໃນຫົວໃຈ |
| 59. ຊ່ວຍເຖີດນາງໝໍ | 85. ນ້ອງຍອມຫຼີກທາງ |
| 60. ຊາຍໃຈຊື່ | 86. ນວນນ້ອງວຽງສະຫວັນ |
| 61. ຊຽງຂວາງແດນງາມ | 87. ນາງທີ່ຮັກ |
| 62. ຊາຕາອາພັບ | 88. ນີ້ຫຼືຮັກຈິງ |
| 63. ເຊບັ້ງຫຽງ | 89. ນ້ຳຂອງຍາມແລງ |
| 64. ເຊໂດນແດນງາມ | 90. ນ້ຳຖ້ວມຖິ່ນເພັຽ |
| 65. ເຊໂປນລຳລຶກ | 91. ບາງທີ |
| 66. ເຊື່ອອ້າຍດີກວ່າ | 92. ບ້ານນາຜາສຸກ |
| 67. ຍັງຮັກນ້ອງຢູ່ | 93. ບ້ານໂພນທີ່ຝັງໃຈ |
| 68. ຍາມຮັກຍາມຊັງ | 94. ບອກຄັ້ງສຸດທ້າຍ |
| 69. ດົງຮັກດົງສລາຍ | 95. ບຸ່ງພ້າວສາວງາມ |
| 70. ດົງໂດກດົງໃຈ | 96. ບຸບຜາຈອມໃຈ |
| 71. ຍິ້ມເຖີດນ້ອງຢ່າຮ້ອງໄຫ້ | 97. ບໍ່ອາດລືມນ້ອງລົງ |
| 72. ດົນໆຈຶ່ງເຫັນກັນ | 98. ບໍ່ລືມວຽງຈັນ |
| 73. ດອກບົວທອງ | 99. ບໍ່ຮັກບໍ່ຈິ້ງ |
| 74. ດີໃຈທີ່ໄດ້ຮູ້ຈັກກັນ | 100. ບໍ່ຫວັ່ນ |

| | |
|---|---|
| 101. ປາກເຊແດນງາມ | 127. ມົນຮັກວັງວຽງ |
| 102. ປາກ | 128. ມະຍຸຣີ |
| 103. ປາແດກກົ້ນໄຫ | 129. ມີຄູ່ເສັ່ງເຖີດ |
| 104. ປູ່ຈັນ | 130. ເມືອງມໍລະດົກໂລກ |
| 105. ເປັນມິດກັນດີກວ່າ | 131. ເມືອງຊຳລຳລຶກ |
| 106. ເປັນຫຍັງຈຶ່ງລືມ | 132. ຢາກພົບຄັ້ງສຸດທ້າຍ |
| 107. ໂປຣດອຸບອິກອ້າຍດ້ວຍຈູບຮັກ | 133. ຢາກໃຫ້ໂລກນີ້ມີເຮົາສອງຄົນ |
| 108. ໄປໃສມາ | 134. ຢາກເຫັນຄົນຮັກ |
| 109. ໄປຄ້າຍມາ | 135. ຢ່າກຽດກັນ |
| 110. ຜູ້ຍິງໜໍ່ຜູ້ຍິງ | 136. ຢ່າເຊື່ອຜູ້ຊາຍ |
| 111. ຜູ້ຊາຍມານຍາ | 137. ຢາດນ້ຳທານຮັກ |
| 112. ໃຜມີໃຈຮັກແທ້ | 138. ຢາກຝາກຄວາມຮັກ |
| 113. ໃຜລວງໃຜ | 139. ຢາດນ້ຳຝົນຢົດນ້ຳຕາ |
| 114. ຝາກຮັກກັບຢາດຝົນ | 140. ຢ່າມາອໍ້ແອ້ |
| 115. ພາບແຫ່ງຄວາມຫຼັງ | 141. ອໍ້ແອ້ເພາະຮັກ |
| 116. ພອນວັນເກີດ | 142. ຢ່າມົວເລືອກ |
| 117. ພໍກັນທີ | 143. ຢ່າຫ່ວງ |
| 118. ເພື່ອນກິນເພື່ອນຕາຍ | 144. ຢ່າລືມສັນຍາ |
| 119. ພຽງຜິດນັດ | 145. ຢ່າຫ້າມໃຈ |
| 120. ພຽງນ້ອງຈາກ | 146. ຢ່າຫຼິ້ງຕົນ |
| 121. ພຽງແຕ່ຄິດ | 147. ຣາຕຣີພາຝັນ |
| 122. ເພັດໃນຕົມ | 148. ລືມເສັ່ງເຖີດ |
| 123. ເພາະຮັກ | 149. ລືມໄລບ້ານປ່າ |
| 124. ເພາະອ້າຍລືມນ້ອງບໍ່ລົງ | 150. ລົມໜາວສາວຈົ່ມ |
| 125. ເພື່ອກັນລືມ | 151. ລາສາວທົ່ງ |
| 126. ຟັງນະຄົນດີ | 152. ລາ |

| | |
|---|---|
| 153. ລາວຈິ່ງຮັກລາວ | 177. ຮັກສາວວຽງຈັນ |
| 154. ລຳວົງພາເພີນ | 178. ຮັກສາວໂພນໂຮງ |
| 155. ວິມານວຽງທອງ | 179. ຮັກສາວລີເຊ ( LYCEE ) |
| 156. ວອນນ້ອງກັບຄືນ | 180. ຮັກສາວເຮືອນໃກ້ |
| 157. ວຽງຈັນຂວັນໃຈ | 181. ຮັກນຶ່ງໃຈດຽວ |
| 158. ວຽງໃນຝັນ | 182. ຮັກນີ້ທີ່ອ້າຍລືມ |
| 159. ຫົວໃຈລຳພັນ | 183. ຮັກບໍ່ລືມ |
| 160. ຫົວໃຈຫວ້າງ | 184. ຮັກກໍ່ບອກ - ບໍ່ຮັກກໍ່ບອກ |
| 161. ຫວນຄິດເຖິງຍາມເຮົາຮັກກັນ | 185. ຮັກເຈົ້າສຸດຫົວໃຈ |
| 162. ຫີນເຫີບແດນງາມ | 186. ຮັກເຈົ້າດອກຈຶ່ງຢອກເຈົ້າຫຼິ້ນ |
| 163. ຫ້ອງນອນສີຟ້າ | 187. ຮັກພຽງຊົ່ວຝັນ |
| 164. ຫ່າງຮັກ | 188. ຮັກເພື່ອຊ້ຳ |
| 165. ອ້າຍຂໍເວລາສອງປີ | 189. ເຮືອຮັກທ່າໃຈ |
| 166. ອ້າຍຈະຄອຍ | 190. ໜາມຊີວິດ |
| 167. ອ້າຍຍັງຈະຫວນຄືນມາ | 191. ເໝືອນຄົນມີກຳ |
| 168. ອ້າຍມາທີຫຼັງ | 192. ໜາວນີ້ແສນລະທົມ |
| 169. ອ້າຍອາດມາຊ້າ | 193. ໜາວໝອກ |
| 170. ອ້າຍຊິ່ວຢ່າງໃດ | 194. ຫຼີກໄປ |
| 171. ອາໄລຮັກ | 195. ຫຼັງສາກ |
| 172. ໂອ ! ເມືອງຫຼວງ | 196. ຫຼວງພຣະບາງແດນງາມ |
| 173. ອຳນາດຮັກ | 197. ເຫຼືອພຽງພາບ |
| 174. ເອື້ອມບໍ່ເຖິງ | 198. ເຫຼືອພຽງຮອຍຊ້ຳ |
| 175. ຮັກສລາຍ | 199. ຫວັ່ນໃຈ |
| 176. ຮັກສາວລ່ອງແຈ້ງ | |

# ຊາດລາວ

*ເນື້ອຮ້ອງ : ສີຊະນະ ສີສານ*
*ທຳນອງ ໂດຍ : ດຣ.ທອງດີ ສູນທອນວິຈິດ*

- ຊາດລາວ $^{F}$ ຕັ້ງແຕ່ໃດມາ  ລາວທຸກທົ່ວໜ້າ ເຊີດຊູສຸດໃຈ
  ຮ່ວມແຮງ ຮ່ວມຈິດຮ່ວມໃຈ  ສາມັກຄີກັນ ເປັນກຳລັງດຽວ $^{C}$
  ເດັດດ່ຽວ $^{F}$ ພ້ອມກັນກ້າວໜ້າ  ບູຊາ $B^b$ ຊູກຽດຂອງລາວ $^{Gm}$
  ສົ່ງເສີມ $^{F}$ ໃຊ້ສິດເປັນເຈົ້າ  ລາວທຸກຊົນເຜົ່າ $^{C}$ ສະເໝີພາບກັນ $^{F}$

- ບໍ່ໃຫ້ $^{F}$ ຝູງຈັກກະພັດ  ແລະພວກຂາຍຊາດ $B^b$ ເຂົ້າມາລົບກວນ $^{F}$
  ລາວທັງມວນຊູເອກະລາດ  ອິດສະລະພາບຂອງຊາດລາວໄວ້
  ຕັດສິນໃຈ $B^b$ ສູ້ຊີງເອົາໄຊ $^{F}$ ພາຊາດກ້າວໄປ $^{C}$ ສູ່ຄວາມວັດທະນາ $^{F}$

# ກຸຫຼາບປາກຊັນ

*ເນື້ອຮ້ອງແລະ ທຳນອງໂດຍ : ສຸຣິວັດ ຣັດຕະນະສະຫວັນ*

*ຮ້ອງໂດຍ : ຄຳເຕີມ ຊານຸບາ*

***Lamwong Intro : F- F - $A_7$ – Dm***

I
ແດນດິນຖິ່ນໄກ ເຫຼືອຕາ Dm
ຢູ່ສຸດນະພາ ຍັງມີດອກຟ້າແສນງາມ C
ຫາກໃຜໄດ້ເຫັນຈະມົວຫຼົງ Dm ເຝົ້າຝັນພະວົງຫຼົງຕິດຕາມ F
ສາວເອີຍສາວງາມ ງາມເຫຼືອໃຈ A

II
ງາມຈິງດັ່ງຄຳ ເຂົາຊົມ Dm
ຫາກໄດ້ສຸກສົມ ຊື່ນຊົມກັບນ້ອງສົມໃຈ C
ອ້າຍຂໍໄຝ່ຝັນແຕ່ນາງດຽວ Dm ບໍ່ຂໍຂ້ອງກ່ຽວຍິງອື່ນໃດ F
ເຝົ້າແຕ່ຫຼົງໄຫຼ $A_7$ ໄຝ່ຝັນໃຈປອງ Dm

R
ໂອ $B^b$ ກຸຫຼາບ ສະຫວັນ Gm
ແຫ່ງເມືອງປາກຊັນ Gm ທີ່ອ້າຍໄຝ່ຝັນ $B^b$ ໝາຍປອງ F
ໃຈ Gm ຫວັງຢູ່ຄຽງປະຄອງ F ກຸຫຼາບເປັນສີດັ່ງທອງ Am
ເມື່ອຍາມແສງສ່ອງ ຈາກດວງສຸລີ A

III
ຍາມແລງຄຳລົງ ນ້ຳຊັນ Dm
ໂອ ບໍລິຄັນ ນ້ຳຊັນໄຫຼຜ່ານໃສດີ C
ແລເຫັນໝູ່ສາວເຈົ້າລ່ອງລອຍ Dm ໝູ່ປາໃຫຍ່ນ້ອຍລອຍຫຼິ້ນຄື F
ສົ້ນແສງສຸລີ $A_7$ ສອດສີແສງຈັນ Dm

# ກຸຫຼາບປາກເຊ

*ເນື້ອຮ້ອງແລະ ທຳນອງໂດຍ : ບຸນທະມາລີ ບຸນຊ່ວຍ*

*ຮ້ອງໂດຍ : ບຸນທະມາລີ ບຸນຊ່ວຍ*

***Intro:** F-F-Gm-C-F-F*

- ກຸຫຼາບປາກເຊ *F* ເອົາໄວ້ເອ້ງາມຕາ
  ບຸບຜາເຄີຍຖະໜອມ *Gm-C* ຫອມກິ່ນບໍ່ວາຍ *F*

I ຫອມດວງມາລາ *F* ນຶກຢາກໄດ້ບູຊາ *Dm* ໃນເມື່ອຍາມຮາຕີ *F*
ສິ່ງທີ່ພາເບີກບານ *B^b^* ໃນສະຖານບ້ານເຮົາ *F*
ງາມຈິງບໍ່ເສົ້າ *F* ທຳໃຫ້ເຮົາງາມຍິ່ງ ເປັນທີ່ສິ່ງເຕືອນຕາ *Gm-C*
ຫອມຊື່ນວິນຍາ *F* ດວງມາລາງາມຍິ່ງ *B^b^*
ອັນເປັນສິ່ງຕ້ອງຕາ *Dm* ດວງມາລາເຄີຍຊົມ (ຊ້ຳ) *F-C-F-F*
ກຸຫຼາບປາກເຊ *F* ເອົາໄວ້ເອ້ງາມຕາ
ບຸບຜາເຄີຍ ຖະໜອມ *Gm* ຫອມກິ່ນບໍ່ວາຍ *F*

II ກຸຫຼາບຂອງໃຜ *F* ນຶກຢາກໃສ່ພານທອງ *Dm* ບໍ່ໃຫ້ເສົ້າໝອງສີ *F*
ເຈົ້າມາລີແຄມເຊ *B^b^* ເອົາໄວ້ເອ້ໄວ້ຊົມ *F*
ດູດອກແລະໃບ *F* ງາມຕິດໃຈທຸກສິ່ງ ຄິງບໍ່ມີວັນລືມ *Gm-C*
ບໍ່ຄວນຢູ່ປ່ຽວ *F* ຄົງຈະຫ່ຽວແຫ້ງໄປ *B^b^*
ດູອັນໃດງາມຍິ່ງ *Dm* ທຸກໆສິ່ງຕ້ອງຕາ ( ຊ້ຳ ) *F-C-F-F*

III ເຮົາເຄີຍເດັດດົມ *F* ຍາມແລງເຄີຍຊົມ *Dm* ຕາມສາຍລົມແຄມເຊ *F*
ເມື່ອສາຍລົມເລ້ລວນ *B^b^* ກິ່ນນັ້ນຊວນໃຈເຮົາ *F*
ຄິດເຖິງຄວາມເກົ່າ *F* ທີ່ເຮົາເຄີຍມີມາ ເຄີຍເບີກບານດອມກັນ *Gm-C*
ຍອດລົມຫາຍໃຈ *F* ຮັກບໍ່ມີວັນວາຍ *B^b^*
ແສນເສຍດາຍດວງນັ້ນ *Dm* ທຸກຄືນວັນບໍ່ວາຍ ( ຊ້ຳ ) *F-C-F-F*

- ກຸຫຼາບປາກເຊ *F* ເອົາໄວ້ເອ້ງາມຕາ
  ບຸບບຜາເຄີຍຖະໜອມ *Gm-C* ຫອມກິ່ນບໍ່ວາຍ *F*

# ກຸຫຼາບແທນກາຍ

*ເນື້ອຮ້ອງ ແລະ ທຳນອງ ໂດຍ : ສຳ ແສງສີຣິວັນ*

*ຮ້ອງໂດຍ : ສົມພອງ*

***Intro : C-Am – Am-G-C***

**I** ກຸຫຼາບດອກນີ້ *Am* ຊ່າງງາມດີນ້ອງນີ້ຂໍມອບໃຫ້ *C*
ເພື່ອເປັນຂວັນໃຈ ແກ່ຍອດຊາຍທີ່ປາຖະໜາ *C*
ກຸຫຼາບກິ່ນຫອມ *C* ນ້ອງຖະໜອມຢູ່ທຸກວັນເວລາ *F*
ແຕ່ເພື່ອອ້າຍດອກໜາ *F* ນ້ອງຈຶ່ງເດັດມາມອບໃຫ້ແທນກາຍ *Dm-G*

**II** ກຸຫຼາບດອກນີ້ *Am* ປຽບຊີວິນ້ອງຖອດແຝງສະຖິດ *C*
ເມື່ອໃດໝອງຈິດ ໂປດຢ່າຄິດຢຽບຢ່ຳທຳລາຍ *C*
ຂໍຈົ່ງຮັກສາ *C* ແມ່ນບຸບຜາຈະຊ້ຳສິແຫ້ງໃບ *F*
ແຕ່ອ້າຍຢ່າປ່ຽນໃຈ *F* ຢ່າຄິດແໜງໜ່າຍຊັງເຈົ້າຂອງກຸຫຼາບ *F*

**R** ບຸບຜາປ່ຽນໄປ *Dm* ປຽບຮ່າງກາຍຂອງຄົນເຮົານີ້ *Am*
ໜຸ່ມແໜ້ນຕຶງດີ *Am* ເຖົ້າແກ່ເສຍສີປ່ຽນແປງສະພາບ *C*
ເວັ້ນແຕ່ຫົວໃຈ *C* ມິປ່ຽນໄປເໝືອນດັ່ງກຸຫຼາບ *Am*
ຍິ່ງນານຮັກຊຶມຊາບ *C* ຊວງໃນ *G* ຖ້າໃຜມີຮັກຈິງ *C*

**III** ກຸຫຼາບດອກດຽວ *Am* ປຽບຮັກດຽວນ້ອງຝາກຝັງຕໍ່ອ້າຍ *C*
ບໍ່ມີສອງໃຈ ຝາກກັນໄວ້ *Dm* ດ້ວຍກຽດຂອງຍິງ *C*
ຂໍແຕ່ຕົວອ້າຍ *C* ນັ້ນຢ່າໝາຍພຽງຫວັງຊົມແນບອີງ *F*
ຈົ່ງຮັກຈາກໃຈຈິງ *F* ແລ້ວທຸກໆສິ່ງ *G* ຈະເປັນຂອງອ້າຍເລີຍ *C*

# ກ້ຽວສາວແຄມງື່ມ

*ເນື້ອຮ້ອງ ແລະ ທຳນອງ ໂດຍ : ສໍ ແສງສີຣິວັນ*

*ຮ້ອງໂດຍ : ຄຳເຕີມ ຊານຸບານ ແລະ ທານຕະວັນ ຣາຊາສັກ*

***Intro : Dm - Dm***

( ຊາຍ ) ໂອ ! Dm
ອ້າຍຂໍຝາກໄມຕີ
ຂໍຝາກກາຍ F
ມອບໃຫ້ແດ່ຈອມຂວັນ Bb
ຮັກເຈົ້າແລ້ວ Dm
ຫວັງຕາຍຮ່ວມສາວງື່ມ Dm
▪ ( ຍິງ ) ໂອ ! Dm
ນ້ອງເກີດມາບໍ່ເຄີຍ
ນ້ອງເປັນສາວ F
ໃຜບໍ່ເຄີຍມາວອນ Bb
ມີແຕ່ອ້າຍ Dm
ນ້ອງເອງບໍ່ຂັດຂ້ອງ Dm
▪ ( ຊາຍ ) ນ້ຳງື່ມ F
ກໍ່ປຽບເໝືອນຫົວໃຈ
▪ ( ຍິງ ) ນ້ຳງື່ມ
ຂໍດວງໃຈອ້າຍນັ້ນ
( ຊາຍ ) ໂອ ! Dm
ອ້າຍຂໍຮັກນ້ອງໝັ້ນ
▪ ( ຍິງ ) ນ້ອງເໝືອນກັນ F
ຮັກແຕ່ພຽງອ້າຍນີ້ Bb
▪ ( ຊາຍ ) ບຸນອ້າຍແລ້ວ Dm
( ຍິງ ) ເພາະນ້ອງກໍຮັກອ້າຍ Dm
) ນ້ອງເອີຍ F
( ຍິງ ) ອ້າຍເອີຍ
(ຍິງ+ຊາຍ) ເຮົາຂໍຢູ່ຮ່ວມກັນ

ສາວແຄມງື່ມແຫ່ງນີ້
ກັບນ້ອງນີ້ດ້ວຍໃຈໝາຍໝັ້ນ
ຝາກດວງຊີວັນ
C ນວນນ້ອງສາວແຄມງື່ມ F
ອ້າຍບໍ່ D ຄິດຈະລະລືມ Gm
ບໍ່ລືມ ບໍ່ເລືອນໜີເລີຍ F
ບ່າວ ວຽງຈັນນີ້ເອີຍ
ຈະຮັກຊາຍຄົນໃດມາກ່ອນ
ສາວປ່າດົງດອນ
C ຂໍຄວາມຮັກຈາກນ້ອງ F
ຄົນດຽວ D ທີ່ມາໝາຍປອງ Gm
ຮັກນ້ອງ C ແລ້ວຢ່າປ່ຽນໃຈ Dm
ຮັກແຄມງື່ມນັ້ນພຽງໃດ
ອ້າຍຮັກນ້ອງພຽງນັ້ນ
ຮັກແຄມບໍ່ຍອມແປຜັນ
ເໝືອນນ້ຳງື່ມນີ້ແລ້ວກໍພໍ Gm
ສາວແຄມງື່ມນີ້ນໍ
ຊົ່ວຊີວັນຈະຈາກໂລກນີ້
ຈະຊື່ສັດພັກດີ
C ບໍ່ມີວັນລືມ ໄດ້ F
ນ້ອງແກ້ວ D ເຈົ້າຍັງເຫັນໃຈ Gm
ຮັກອ້າຍໝາຍຝາກຊີວັນ Dm (ຊາຍ
ຢ່າເລີຍລະລືມຮັກນັ້ນ
ນ້ອງບໍ່ລະເລີຍຮັກນັ້ນ
ຮັກກັນ C ຊົ່ວນິລັນດອນ Dm

# ກັບມາຮັກກັນໃໝ່

*ເນື້ອຮ້ອງແລະ ທຳນອງໂດຍ : ວໍຣະເດດ ດິດທະວົງ*

*ຮ້ອງໂດຍ : ວໍຣະເດດ ດິດທະວົງ*

***Slow Intro : D-Bm- F#m -Em-D-D-D***

**I** ເມື່ອວາໄຍ **F#m** ໂຊຍຜ່ານມາ **D**
ຍິ່ງໂນ້ມໃຈ **F#m** ໃຫ້ຮຽກຫາ **D** ແຕ່ນ້ອງ **G**
ສຸດໝາຍປອງ **A** ນ້ອງຢູ່ໃສ **Bm**
ຢູ່ໃສ ... **F#m** ລີ້ຢູ່ໃສ **D**

**II** ຍິ່ງຄິດໄປ **F#m** ໃຈໂສກສັນ **D**
ເມື່ອສຳພັນ **F#m** ມາຈືດຈາງ **D**
ຫ່າງຫາຍ **G** ສຸດສາຍໃຈ **A**
ແລ້ວເມື່ອໃດ **Bm** ເມື່ອໃດ **F#m** ນ້ອງຈະໃຫ້ຄວາມຫວັງ **D**

***R*** **F#m** ກັບມາເຖີດ *ທີ່ຮັກ ...* **F#m** - **Bm**
ຄືນຮັກ ກັນໃໝ່ **D**
ເລື່ອງແລ້ວໄປ **G** ເປັນພຽງຄວາມຫຼັງ **D-D7**
ອ້າຍນີ້ຍັງ **F#m** ຍັງຮັກນ້ອງ **G** ຢູ່ຢ່າງເຄີຍມີ **D**

**III** ຫາກເມື່ອໃດ **F#m** ນ້ອງກັບຫັນ **D**
ຜູກສຳພັນ **F#m** ໝັ້ນດັ່ງເຄີຍ **D**
ອ້າຍນີ້ **G** ຈະຂໍມີ **A**
ມີແຕ່ຮັກ **Bm** ຖະໜອມ **F#m** ມີໃຫ້ເສົ້າໝອງ **D**

24/VII
ຫ້າມຈຳໜ່າຍ

# ກ້ຽວສາວບ້ານເກີນ

*ເນື້ອຮ້ອງ ແລະ ທຳນອງ ໂດຍ : ບິນ ສຸດາຈັນ*

*ຮ້ອງໂດຍ : ບິນ ສຸດາຈັນ*

I ເມື່ອອ້າຍໄດ້ມາ ມາພົບສາວແຕ່ພຽງຄັ້ງດຽວ
ຫົວໃຈອ້າຍນີ້ຢາກໂນ້ມໜ່ຽວ ອ້າຍຈິນຫຼົງກ້ຽວງສາວບ້ານເກີນ
ນ້ອງຊ່າງງາມຍິ່ງ ຢາກແອບອີງນ້ອງນາງຢ່າເມີນ
ອ້າຍຂໍບອກສາວຈິ່ງເຫັນໃຈເທີ້ນ ຜູ້ທີ່ຫຼົງເດີນພັດຖິ່ນບ້ານມາ

II ອ້າຍໄດ້ຍິນຄຳ ຄຳວ່າຮັກມາຈາກຊານໄວ
ຄຳເວົ້າສາວນີ້ຊ່າງຫຼົງໄຫຼ ຊາບຊຶ້ງຕຶງໃຈໃນດວງອຸຣາ
ຈົ່ງເໝືອນຄຳເວົ້າ ທີ່ອ້າຍແລະສາວເຄີຍເວົ້າກັນມາ
ຢ່າລວງໃຫ້ອ້າຍນີ້ເສັຽນ້ຳຕາ ເໝືອນນ້ຳຖ້ວມນາຂອງອ້າຍຫຼົ້ມຈົມ

R ນ້ອງຂວັນຕາຈົ່ງສົງສານ ຫາກນ້ອງເຫັນໃຈອ້າຍນັ້ນ
ຈະຮັກຈອມຂວັນ ບໍ່ໃຫ້ໂສກຕຣົມ
ປີໜ້າຕໍ່ໄປ ຈະປູກເຂົ້າໄຮ່ເຂົ້ານາໃຫ້ສົມ
ຫາກແມ່ນດິນຟ້າໃຫ້ຄວາມອຸດົມ ຈະຂໍພິລົມໃຫ້ສົມຮັກດຽວ

III ອ້າຍຈະຂໍຈຳ ດິນຖິ່ນນີ້ທີ່ເຄີຍໄດ້ຢູ່
ກັບຄວາມຮັກທີ່ນ້ອງອູ້ມຊູ ດິນຟ້າຈົ່ງຮູ້ໄວ້ເປັນສັກຂີ
ເຖິງຢູ່ໄກກັນ ຫົວໃຈອ້າຍນັ້ນບໍ່ໄດ້ໜ່າຍໜີ
ອີກປີໜ້າຈະມາອີກທີ ສູ່ຂໍຄືນດີສາວບ້ານເກີນ.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ